PLAN INTERNATIONAL

Until we are all equal

**ອົງການແພລນສາກົນ ປະຈຳ ສ ປ ປ ລາວ**

ປະກາດແຈ້ງການເຂົ້າຮ່ວມສົມທຽບລາຄາ ບໍລິການຫ້ອງປະຊຸມ

ອົງການແພລນສາກົນ ປະຈຳ ສປປ ລາວ ແມ່ນອົງການສາກົນທີ່ພັດທະນາຊຸມຊົນໂດຍຖືເອົາ ເດັກນ້ອຍເປັນໃຈກາງ ພວກເຮົາຊ່ວຍເຫຼືອເດັກທຸກຍາກຢູ່ຫຼາຍປະເທດທີ່ກຳລັງພັດທະນາໃນທົ່ວໂລກ. ປະຈຸບັນອົງການແພລນ ກຳລັງຈັດຕັ້ງປະຕິບັດໂຄງການຢູ່ 5 ແຂວງ: **ແຂວງ ບໍ່ແກ້ວ, ອຸດົມໄຊ, ຈຳປາສັກ, ວຽງຈັນ, ຫຼວງພະບາງ ແລະ ມີຫ້ອງການໃຫຍ່ຢູ່ນະຄອນຫຼວງວຽງຈັນ.** ແຕ່ລະປີອົງການແພລນໄດ້ມີການໃຊ້ບໍລິການ ຫ້ອງປະຊຸມ ບໍ່ວ່າຈະເປັນຫ້ອງຂະໜາດນ້ອຍ, ກາງ ແລະ ໃຫຍ່ ເຊິ່ງປະກອບດ້ວຍ ອຸປະກອນຮັບໃຊ້ໃນຫ້ອງປະຊຸມ, ອາຫານວ່າງ ແລະ ອາຫານສວຍ ຫຼື ຄ່ຳ. ສະນັ້ນ, ອົງການແພລນ ຂໍຖືໂອກາດແຈ້ງເຊີນມາຍັງບັນດາໂຮງແຮມ/ຮ້ານອາຫານທີ່ມີປະສົບການໃນການໃຫ້ບໍລິການຫ້ອງປະຊຸມທີ່ສົນໃຈ ປະກອບເອກະສານສົມທຽບລາຄາການໃນບໍລິການຢູ່ **ນະຄອນຫຼວງວຽງຈັນ ແລະ ຕົວເມືອງ ວັງວຽງ.** ລາຍລະອຽດເງື່ອນໄຂດັ່ງລຸ່ມນີ້:

- ສຳເນົາ ທະບຽນວິສາຫະກິດ ແລະ ໃບອະນຸຍາດດຳເນີນທຸລະກິດ ທີ່ຍັງໃຊ້ໄດ້ 1 ຊຸດ
- ສຳເນົາ ໃບເສຍພາສີອາກອນປະຈຳປີ 2025 ຫຼື 2026 1 ຊຸດ
- ເອກະສານອື່ນໆ ແມ່ນໃຫ້ປະກອບຕາມເງື່ອນໄຂໃນເອກະສານຄັດຕິດ

ບັນດາໂຮງແຮມ/ຮ້ານອາຫານ ທີ່ມີຄວາມສົນໃຈ ກະລຸນາເຂົ້າມາເອົາແບບຟອມສົມທຽບລາຄາຢູ່ຫ້ອງການ ແລ້ວປະກອບເອກະສານສົ່ງຫາຫ້ອງການ ອົງການແພລນສາກົນ ປະຈຳ ສປປ ລາວ ດັ່ງທີ່ຢູ່ຂ້າງລຸ່ມນີ້ ຫຼື ອີເມວ Laos.procurement@plan-international.org

ມື້ສຸດທ້າຍໃນການຍື່ນເອກະສານສົມທຽບລາຄາແມ່ນບໍ່ໃຫ້ກາຍ **17:00 ໂມງແລງ ຂອງວັນທີ 11 ກຸມພາ 2026.**

| ຫ້ອງການອົງການແພລນປະຈຳນະຄອນຫລວງວຽງຈັນ |
|---|
| ເຮືອນເລກທີ 203, ໜ່ວຍ 10, ບ້ານ ໂພນສີນວນ, ມ. ສີສັດຕະນາກ, ນະຄອນຫຼວງວຽງຈັນ ສປປ ລາວ<br>ໂທຣ: +856 (0) 21 353 409 -11, ແຟັກ: +856 (0) 21 313 512. |

**ໝາຍເຫດ:**

- ໂຮງແຮມ/ຮ້ານອາຫານ ທີ່ຍື່ນເອກະສານສົມທຽບລາຄາ ຕ້ອງຍິນດີທີ່ຈະເຮັດສັນຍາໄລຍະຍາວກັບອົງການແພລນ, ຮັບເງິນໂອນ, ຮັບແຊັກ (Check), ແລະ ສາມາດຕິດໜີ້ໄດ້.
- ເອກະສານ ແລະ ຂໍ້ມູນຖືກຕ້ອງຕາມເງື່ອນໄຂ ຕ້ອງປົກປິດເປັນຄວາມລັບ ແລະ ບັນຈຸໃນຊອງທີ່ປິດຢ່າງສະນິດແໜ້ນ, ການຕື່ມລາຄາຄວນຄິດໄສ່ໃນຄອມພິວເຕີ ຫຼື ຂຽນກໍ່ໄດ້ ແຕ່ໃຫ້ລະອຽດ ແລະ ຫຼີກເວັ້ນການເປື້ອນ ຫຼື ຕື່ມຜິດ.
- ເອກະສານທີ່ທາງໂຮງແຮມ/ຮ້ານອາຫານສົ່ງຫາອົງການແພລນແລ້ວ ຈະບໍ່ສາມາດຖອນຄືນໄດ້.

ວັນທີ: 29 ມັງກອນ 2026

PLAN INTERNATIONAL ອົງການແພລນສາກົນ ປະຈຳ ສປປ ລາວ

ແສງສັນຕິສຸກ ຊະນະສີສານ
ອຳນວຍການບໍລິຫານ
ອົງການແພລນສາກົນ ປະຈຳ ສປປ ລາວ